**ເດືອນພຶສພາ 2007/May 2007** **LAO**

**SHB: (CDB) 07/098(Lao)**

# ຢາປົວພຍາດວັນນະໂຣກ

## ຣາຍລະອຽດສໍາລັບຄົນເຈັບ

## TUBERCULOSIS MEDICATIONS
## Information for patients

ທ່ານກໍາລັງຈະໄດ້ເລີ້ມກິນຢາປົວພຍາດເປັນຊຸດຊຶ່ງໝໍສັ່ງອອກໃຫ້ເພື່ອປົວພຍາດວັນນະໂຣກ (TB) ຂອງທ່ານ. TB ແມ່ນພຍາດຮ້າຍແຮງຊນິດນຶ່ງຊຶ່ງຈະທໍາລາຍສຸຂພາບຂອງທ່ານຖ້າຫາກວ່າບໍ່ທໍາການປິ່ນປົວ. ພຍາດTB ສາມາດຖືກກໍາຈັດໃຫ້ຫາຍຂາດໄດ້ ເມື່ອໄດ້ກິນຢາປົວພຍາດ ຢ່າງຖືກຕ້ອງ.

### *ການຄວບຄຸມ*

ເປັນສິ່ງສໍາຄັນທີ່ທ່ານຕ້ອງໄດ້ກິນຢາຕາມກໍານົດທີ່ໝໍສັ່ງ. ການກິນຢາແບບບໍ່ສມໍ່າສເມີອາດເຮັດໃຫ້ພຍາດດື້ຢາ, ຊຶ່ງຈະ ເຮັດໃຫ້ການປິ່ນປົວລໍາບາກຍິ່ງຂຶ້ນ.

ເພື່ອຫຼີກເວັ້ນບັນຫາດັ່ງກ່າວ ການປິ່ນປົວພຍາດ TB ທຸກໆແບບຕ້ອງໄດ້ຮັບການຄວບຄຸມຢ່າງໃກ້ຊິດ. ນີ້ໝາຍເຖິງວ່າຄົນເຈັບຕ້ອງກິນຢາຕໍ່ໜ້າ ພຍາບານຫຼືພະນັກງານແພດອື່ນໆ. ພຍາບານຢູ່ທີ່ຄລີນິກປິ່ນປົວ TB ສາມາດຕອບຄໍາຖາມທຸກໆຢ່າງທີ່ທ່ານຢາກຖາມກ່ຽວກັບການປິ່ນປົວພຍາດ TB ຂອງທ່ານນີ້. ເຂົາເຈົ້າສາມາດຕິດຕາມເບິ່ງອາການຂ້າງຄຽງຕ່າງໆທີ່ເກີດຈາກການປິ່ນປົວໄດ້ ແລະຖ້າຈໍາເປັນ ເຂົາເຈົ້າກໍສາມາດເຮັດນັດໝາຍໃຫ້ທ່ານພົບກັບທ່ານໝໍໄດ້.

ເປັນການ**ຈໍາເປັນທີ່ສຸດ** ທີ່ທ່ານຕ້ອງກິນຢາຕໍ່ໄປ ຈົນກວ່າທ່ານໝໍທີ່ຄລີນິກປົວ TB ບອກໃຫ້ທ່ານເຊົາກິນຢາໄດ້ (ເຖິງແມ່ນວ່າທ່ານຈະຮູ້ສຶກໄຄຂຶ້ນແດ່ແລ້ວກໍຕາມ), ທັງນີ້ກໍເພື່ອປ້ອງກັນບໍ່ໃຫ້ພຍາດວັນນະໂຣກກັບຄືນມາເປັນໄດ້ອີກ.

### *ເປັນຫຍັງຂ້ອຍຈຶ່ງຕ້ອງໄດ້ກິນຢາພວກນີ້?*

- ເພື່ອກໍາຈັດ ພຍາດ TB ໃຫ້ຫາຍຂາດ;
- ເພື່ອປ້ອງກັນບໍ່ໃຫ້ຈຸລິນຊີຂອງພຍາດ TB ເກີດການດື້ຢາ
- ເພື່ອປ້ອງກັນບໍ່ໃຫ້ພຍາດ TB ເກີດການແຜ່ຜາຍລາມອອກໄປ.

### *ມີຢາຫຍັງແດ່ທີ່ໃຊ້ປົວພຍາດ TB?*

ຕາມປົກກະຕິ ຢາທີ່ໃຊ້ປົວພຍາດ TB ແມ່ນ*ຢາຕ້ານເຊື້ອ* ຊຶ່ງເອີ້ນວ່າ Isoniazid, Rifampicin, Pyrazinamide ແລະ Ethambutol. ໝໍອາດຈະສັ່ງໃຫ້ກິນຢານີ້ທຸກໆມື້ ຫຼືວ່າ 3 ເທື່ອຕໍ່ອາທິດ.

ທ່ານຕ້ອງກິນຢາຕາມທີ່ໝໍຂອງທ່ານສັ່ງຢ່າງໜ້ອຍເປັນເວລາຫົກເດືອນ. ໃນບາງກໍຣະນີທີ່ມີນ້ອຍນັກນ້ອຍໜາ ການປິ່ນປົວອາດຕ້ອງໄດ້ເຮັດຕິດຕໍ່ກັນໄປເປັນເວລາເຖິງ 2 ປີ.

ກະລຸນາຢ່າລືມບອກໃຫ້ພະຍາບານຮູ້ຖ້າຫາກວ່າ ດ້ວຍເຫດຜົນໃດເຫດຜົນນຶ່ງ ທ່ານບໍ່ສາມາດໄປທີ່ຄລີນິກ TB ໄດ້, ຫຼືອາດຈະໃຫ້ພະຍາບານມາຫາຢູ່ບ້ານ (ຕົວຢ່າງ ຖ້າທ່ານມີນັດທາງອື່ນອີກ) ເມື່ອຮອດມື້ກິນຢາ ແລະ ພວກເຮົາຈະຊອກຫາວິທີເຮັດນັດໃຫ້ທ່ານໃໝ່.

### *ເປັນຫຍັງຈຶ່ງຕ້ອງໃຊ້ຢາຫຼາຍໆຢ່າງພ້ອມກັນ?*

ບັນດາຢາປົວພະຍາດ TB ແມ່ນຢາປະເພດຕ້ານເຊື້ອ. ຢາເຫຼົ່ານີ້ເຮັດວຽກແບບຕ່າງໆກັນໃນການຂ້າເຊື້ອແບັກທີເຣັຍຂອງ TB. ເຊື້ອແບັກທີເຣັຍຂອງ TB ຕາຍຊ້າ ສະນັ້ນຈຶ່ງຕ້ອງໄດ້ໃຊ້ຢາປົວຊະນິດຕ່າງໆປະສົມກັນເປັນຢ່າງຕ່ຳຫົກເດືອນເພື່ອຂ້າເຊື້ອແບັກທີເຣັຍເຫຼົ່ານັ້ນ.

ຖ້າຫາກວ່າໃຊ້ຢາແຍກກັນເທື່ອລະຊະນິດ, ເຊື້ອແບັກທີເຣັຍຂອງ TB ສາມາດກັບກາຍມາດື້ຢາເຫຼົ່ານີ້ໄດ້ຢ່າງໄວ. ໃນອອສເຕຣເລັຍ, ມີຄົນຈຳນວນໜ້ອຍຈຳນວນນຶ່ງມີພະຍາດ TB ທີ່ດື້ຕໍ່ຢາຊະນິດຕ່າງໆທີ່ໃຊ້ປົວ TB. ເມື່ອເກີດເຫດການດັ່ງນີ້ຂຶ້ນ ໝໍອາດຕ້ອງໄດ້ໃຊ້ຢາຕ້ານເຊື້ອຂຶ້ນຕື່ມ ແລະ ການປິ່ນປົວອາດກໍຕ້ອງໃຊ້ເວລາດົນນານຂຶ້ນ.

### *ສິ່ງທີ່ຄວນຣະມັດຣະວັງເມື່ອກຳລັງຮັບການປິ່ນປົວພະຍາດ TB ຢູ່*

ເຫຼົ້າແລະຢາປາຣາເຊຕາໂມລອາດໄປແຊກແຊງຢາປົວດັ່ງກ່າວ. ການດື່ມເຫຼົ້າຫຼືວ່າການກິນຢາປາຣາເຊຕາໂມລໃນລະຫວ່າງທີ່ທ່ານກຳລັງກິນຢາປົວ TB ຢູ່ອາດເຮັດໃຫ້ເກີດປະຕິກິຣິຍາຫຼືມີອາການຂ້າງຄຽງ, ຊຶ່ງອາດຈະທຳລາຍສຸຂພາບຂອງທ່ານໄດ້. ໃນລະຫວ່າງທີ່ຮັບການປິ່ນປົວຢູ່ນັ້ນ ຂໍແນະນຳໃຫ້ທ່ານຫຼີກເວັ້ນການດື່ມເຫຼົ້າ.

ໂປຼດສັງເກດດ້ວຍວ່າ ໃນລະຫວ່າງທີ່ຮັບການປິ່ນປົວຢູ່ນັ້ນ ປະຈຳເດືອນອາດມາບໍ່ປົກກະຕິ. ຂໍແນະນຳໃຫ້ແມ່ຍິງຫຼີກເວັ້ນຈາກການຖືພາ ໃນລະຫວ່າງທີ່ຮັບການປິ່ນປົວ TB ຢູ່. ປະສິດທິພາບຂອງຢາເມັດຄຸມກຳເນີດອາດລົດຖອຍລົງຍ້ອນຢາ Rifampicin, ຊຶ່ງຈະເຮັດໃຫ້ການຄຸມກຳເນີດແບບນີ້ ບໍ່ໄດ້ຜົນໜ້າວາງໃຈໄດ້. ຂໍແນະນຳໃຫ້ແມ່ຍິງທີ່ກຳລັງຮັບການປົວພະຍາດ TB ຢູ່ຈົ່ງໃຊ້ວິທີຄຸມກຳເນີດແບບອື່ນ. ຂໍໃຫ້ປຶກສາກັບໝໍຂອງທ່ານ ວ່າຄວນໃຊ້ວິທີຄຸມກຳເນີດແບບໃດ.

ຖ້າທ່ານ**ຖືພາ** ຫຼືວ່າ **ໃຫ້ລູກກິນນົມຢູ່** ຈົ່ງບອກໝໍທີ່ຄລີນິກປົວ TB ໃຫ້ຮູ້ທັນທີ. ອາດຈະຕ້ອງມີການປ່ຽນຢາທີ່ທ່ານກິນຢູ່ນັ້ນ.

ອາດຕ້ອງມີການກວດເລືອດຢ່າງສມ່ຳສເມີອີກເພື່ອກວດເບິ່ງອາການຂ້າງຄຽງທີ່ອາດເກີດຂຶ້ນໄດ້. ທ່ານໝໍຂອງທ່ານຈະເປັນຜູ້ຈັດການເຣື່ອງການກວດຕ່າງໆນີ້ໃຫ້.

### *ການກິນຢາຫຼາຍແບບປະສົມກັນ*

ເປັນສິ່ງສຳຄັນທີ່ທ່ານຕ້ອງໄດ້ບອກໃຫ້ທ່ານໝໍປົວ **TB** ຮູ້ ຖ້າວ່າທ່ານກຳລັງກິນຢາຢ່າງອື່ນຢູ່ຫຼືວ່າໃຊ້ການປິ່ນປົວແບບສມຸນໄພຢູ່ ເພື່ອວ່າເຮົາຈະສາມາດປະເມີນເບິ່ງອາການຂ້າງຄຽງທີ່ຢາຊະນິດອື່ນມີຕໍ່ການປົວພະຍາດ **TB.**

ບໍ່ຄວນກິນຢາຣະງັບກົດໃນທາງເດີນອາຫານຊຶ່ງມີສານອາລູມີນຽມ (ຕົວຢ່າງ Gaviscon) ພາຍໃນສອງຊົ່ວໂມງຫຼັງຈາກກິນຢາປົວ TB . ການປົວແບບໃຊ້ເມທາດອນ ກໍອາດໄປແຊກແຊງຕໍ່ການປິ່ນປົວ TB ໄດ້. ຢາບາງຢ່າງສຳລັບໃຊ້ປົວໂຣກ diabetes, Parkinson’s disease, HIV, epilepsy ຫຼື cardiac conditions ກໍອາດມີປະຕິກິຣິຍາຕໍ່ຢາປົວພະຍາດ TB ໄດ້. ຖ້າທ່ານກຳລັງໄດ້ຮັບການປິ່ນປົວໂຣກໃດໂຣກນຶ່ງດັ່ງກ່າວຢູ່ ເປັນສິ່ງສຳຄັນທີ່ທ່ານຕ້ອງໄດ້ບອກທ່ານໝໍປົວ TB ຂອງທ່ານໃຫ້ຮູ້.

### *ຈະກິນຢາວິທີໃດ*

ຢາດັ່ງກ່າວຈະເຮັດວຽກໄດ້ຜົນດີທີ່ສຸດ ຖ້າຫາກວ່າທ່ານກິນມັນພ້ອມໆກັນ **ນຶ່ງ**ຊົ່ວໂມງກ່ອນໜ້າ, ຫຼືວ່າ **ສອງ**ຊົ່ວໂມງຫຼັງຈາກ ກິນອາຫານ ແລະທາງທີ່ດີແມ່ນໃຫ້ກິນກັບນ້ຳ. ຖ້າຈະໃຫ້ດີທີ່ສຸດ, ຄວນກິນຢາດັ່ງກ່າວໃນຊ່ວງເວລາດຽວກັນທຸກໆມື້.

ສຳລັບຄົນເຈັບທີ່ມີອາການປວດຮາກ, ຄວນກິນຢາກັບອາຫານເບົາໆ (ເຊັ່ນ ປີ້ງເຂົ້າຈີ່ແບບແຫ້ງ). ຖ້າທ່ານຮູ້ສຶກວ່າມີອາການປວດຮາກ ເປັນສິ່ງສຳຄັນທີ່ທ່ານຕ້ອງບອກພະຍາບານຫຼືທ່ານໝໍ.

ຖ້າທ່ານມີບັນຫາໃນການກິນຢາ, ກະຣຸນາປຶກສາເຣື່ອງນີ້ກັບພະຍາບານຫຼືທ່ານໝໍປົວ TB.

**ອາການຂ້າງຄຽງຈາກຢາປົວ TB**

ເຊັ່ນດຽວກັບຢາທຸກໆຊນິດ, ຢາທີ່ໃຊ້ປົວ TB ບາງຄັ້ງກໍອາດເຮັດໃຫ້ເກີດມີອາການຂ້າງຄຽງໄດ້ໃນບາງຄົນ. ຖ້າເກີດອາການດັ່ງກ່າວ, ກະຣຸນາລາຍງານເຣື່ອງນີ້ໃຫ້ທ່ານໝໍຫຼືວ່າພະນັກງານພະຍາບານທີ່ຄລີນິກປົວ TB ຊາບທັນທີ.

ຖ້າທ່ານເກີດມີອາການບໍ່ປົກກະຕິ, ຫຼືຮູ້ສຶກບໍ່ສະບາຍດ້ວຍເຫດຜົນຢ່າງໃດຢ່າງນຶ່ງ, ກະຣຸນາປຶກສາເຣື່ອງນີ້ກັບພະຍາບານຫຼືໝໍປົວ TB ຂອງທ່ານ. ຖ້າທ່ານຕ້ອງການໝໍໂດຍດ່ວນຫຼັງໂມງເຮັດການ, ໃຫ້ໄປທີ່ພະແນກສຸກເສີນຂອງໂຮງໝໍໃນເຂດທ້ອງຖິ່ນຂອງທ່ານ ແລະ ໃຫ້ຖືເອົາລາຍຊື່ຢາປົວ TB ທີ່ກິນຢູ່ນັ້ນ ໄປນຳ.

***ອາການຂ້າງຄຽງຕ່າງໆທີ່ອາດເກີດຂຶ້ນ ແຕ່ວ່າອາດບໍ່ມີແຕ່ພຽງເທົ່ານີ້:***

- ເປັນຕຸ່ມຜື່ນແລະມີອາການຄັນ
- ປວດຮາກ (ຮູ້ສຶກບໍ່ສະບາຍ), ກິນເຂົ້າບໍ່ແຊບ
- ຜິວໜັງແລະຕາເປັນສີເຫຼືອງ
- ເມື່ອຍອ່ອນເພັຍເກີນເຫດ
- ຕາລາຍ, ບໍ່ເຫັນສີແຈ້ງດີ
- ປະຈຳເດືອນມາບໍ່ປົກກະຕິ
- ຖ່າຍທ້ອງ
- ເຈັບຕາມຂໍ່ຢ່າງຜິດປົກກະຕິ / ປວດບວມແລະອັກເສບຕາມຂໍ່
- ເປັນໄຂ້ຄີງຮ້ອນ, ເຈັບຫົວ ແລະ ເຈັບຕາມກ້າມເນື້ອ
- ເກີດອາການຊ້ຳໄດ້ງ່າຍຂຶ້ນ

ອາການທີ່ເກີດເປັນສີເຫຼືອງໆໃນນ້ຳຕາ, ຕາມຄອນແທັກເລັນຊ໌, ໃນຂີ້ກະເຖົ່ ແລະ ໃນນ້ຳປັສສະວະນັ້ນ ເປັນສິ່ງທັມມະດາສຳລັບຄົນທີ່ກຳລັງໄດ້ຮັບການປົວພະຍາດ TB ຢູ່ແລະບໍ່ແມ່ນສາເຫດທີ່ຄວນເຮັດໃຫ້ກັງວົນ.

**ໂປຼດຢ່າລັງເລໃນການໄປປຶກສາທຸກໆເຣື່ອງທີ່ກ່ຽວກັບປິ່ນປົວກັບທ່ານໝໍປົວ TB ຂອງທ່ານຫຼືປຶກສາກັບພະຍາບານປະຈຳຄລີນິກ.**

ເອກກະສານອ້າງອີງ:


1. Therapeutic Guidelines, Antibiotic, Version 12, 2003
2. Department of Health, Controlling Tuberculosis in NSW 2005